Author Phao Vongkhamchanh chose name of Hanouman to protect his identity when he dictated this history. He felt info was sensitive. He has since died so his paper real name can be made public.

[note by J Butler-Diaz from discussion with W. Sage 6/6/02]

History of Houa Khong Province
by Hanouman
Richmond, CA
March 1982

Richmond 3-19-82.

Dear Bill SAGE.

ຂ້ອຍໄດ້ຮັບໂທຣະສັບ ຈາກທູນເພັງ ນານໄດ້ສາມອາທິດແລ້ວ ວ່າເຈົ້າຕ້ອງການປະຫວັດແຂວງຫົວຂອງ ຂ້ອຍໄດ້ຂຽນແຕ່ອາທິດກ່ອນ ແລະ ໂທຣ. ຫາເຈົ້າສອງເທື່ອແລ້ວ ບໍ່ມີຜູ້ຮັບໂທຣ. ຈຶ່ງ ຂ້ອຍຈຶ່ງຕັດສິນໃຈ ສົ່ງໃບປະຫວັດທີ່ຂ້ອຍຂຽນແລ້ວມາໃຫ້ເຈົ້າພ້ອມດ້ວຍກັບ 12 ແຜ່ນກະດາດ ເພື່ອໃຫ້ເຈົ້າກວດແລະ ຢາກແກ້ໄຂດັດແປງແນວໃດກໍສຸດແລ້ວແຕ່ເຈົ້າ ແຕ່ຂໍຫ້າມເດັດຂາດຢ່າເອົາຊື່ແທ້ຂອງຂ້ອຍໃສ່ ໃຫ້ເອົາຊື່ວ່າ HANOUMAN ນັ້ນໃສ່ແທນ ແລະ ກໍຂໍເຈົ້າຢ່າບອກໃຜວ່າແມ່ນຂ້ອຍເປັນຜູ້ຂຽນ ຖ້າເຈົ້າໄດ້ພິມເປັນພາສາລາວກໍດີ ຫຼືເປັນພາສາອັງກິດ ທີ່ຄັດໄດ້ແກ້ໄຂດັດແປງແລ້ວກໍດີ ຂ້ອຍຂໍຢ່າງລະ 6 ຫົວ ເພື່ອໄວ້ໃຫ້ລູກຫຼານຂ້ອຍອ່ານແດ່.

ຂ້ອຍຍິນດີຕ້ອນຮັບເຈົ້າເອງ ຫາກເຈົ້າມີເວລາຫວ່າງຈະມາຢາມຂ້ອຍ ໃຫ້ໂທຣ. ມາໂດຍ ແລະ ເປັນກັນເອງເໝືອນຢູ່ເມືອງລາວ. ໄດ້ຮັບໃບປະຫວັດນີ້ແລ້ວ ກະລຸນາຕອບຂ້ອຍຊາບດ້ວຍ ເພາະຂ້ອຍກໍດີໃຈຫຼາຍທີ່ເຈົ້າມີແນວຄິດ ກົງກັນກັບຂ້ອຍ ກ່ຽວກັບເລື່ອງເມືອງລາວ.

ຮັກແພງສຸດໃຈ

[signature]

Phao Vongkhamchanh.

# ປະຫວັດແຂວງຫົວຂອງ

## ປະເທສລາວ

(ຮຽບໂດຍ ຫະນຸມານ By HANOUMAN)

ແຂວງຫົວຂອງເປັນແຂວງໜຶ່ງຂອງປະເທສລາວ ທາງດ້ານເໜືອສຸດຂອງປະເທສ ມີອານາເຂດຕິດກັບສວນປະເທສເພື່ອນບ້ານດ້ວຍກັນຄື ທິດເໜືອຕິດກັບປະເທສຈີນລະຫວ່າງບ້ານບໍ່ເຕັນຂອງລາວ ແລະ ບ້ານບໍ່ເຫັດຂອງຈີນໄກກັນປະມານຫົກກິໂລແມດ ຊຶ່ງມີຫຼັກປັກໝາຍຊາຍແດນໂດຍຝຣັ່ງເສສໄດ້ທໍາເອົາໄວ້ ແລ້ວລຽບເລາະລົງທາງທິສຕວັນຕົກຕາມສາຍນໍ້າລື້ (NUMLA RIVER) ປ່ອງໃສ່ແມ່ນໍ້າຂອງທີ່ສົບນໍ້າລື້ ລ່ອງລົງໃຕ້ຕາມທິສຕວັນຕົກຕິດກັບປະເທສພະມ້າ ໂດຍຖືເອົາແມ່ນໍ້າຂອງເປັນແດນ (ຕາມຮ່ອງເລິກຂອງນໍ້າຂອງ ແຕ່ທຸກເກາະດອນໃນລໍານໍ້າຂອງ ແມ່ນຂອງລາວ) ນັບຕັ້ງແຕ່ບ້ານສ້າຂອງພະມ້າ ຈົນເຖິງບ້ານສົບຮວກຂອງໄທຍ໌ ຕໍ່ຈາກນັ້ນແມ່ນເຂດແດນຕິດກັບປະເທສໄທຍ໌ ໂດຍຖືເອົາລໍານໍ້າຂອງເປັນຊາຍແດນເຊັ່ນດຽວກັນ ນັບແຕ່ບ້ານສົບຮວກຈົນຮອດດອນໄດ ຊຶ່ງມີຫຼັກປັກໝາຍຂອງຝຣັ່ງເສສທໍາເອົາໄວ້ລະຫວ່າງແຂວງໄຊຍະບູຣີຂອງລາວຕິດກັບເຂດປະເທສໄທຍ໌ຢູ່ທີ່ນັ້ນ ດ້ານຕວັນອອກຕິດກັບແຂວງພົງສາລີ ແລະດ້ານໃຕ້ຕິດກັບແຂວງຫລວງພຣະບາງ ໂດຍຖືຕາມລໍານໍ້າທາເປັນເຂດແດນມາບັນຈົບກັນທີ່ໃຕ້ບ້ານຄົກຫລວງ

ຜາກາບຮົ້ວຂອງຝັ່ງຂວາ ກໍ່ຮ່ວມກັບຜາໃຕ ຝັ່ງຊ້າຍຊຽງໄທ ຖ້າ
ເບິ່ງຕາມແຜ່ນທີ່ ແລ້ວຈະຮູ້ໄດ້ວ່າ ແຂວງນີ້ແມ່ນຮົ້ວອັນ
ເປັນເຂດແດນຢູ່ທາງສີ່ທິສ. ແຂວງນີ້ເປັນແຂວງທີ່ອຸດົມ
ສົມບູນດ້ວຍພືດສາວາດ ແລະ ວັດຖຸທາດນາໆຊະນິດ ໂດຍ
ສະເພາະແລ້ວແມ່ນປ່າໄມ້ເນື້ອແຂງຊຶ່ງມີອາຍຸຮອດສາມຮ້ອຍ
ປີກໍມີ ແຕ່ຍັງບໍ່ທັນໄດ້ຕັດເອົາອອກມາໃຊ້ ມີທາງພູສູງ
ແລະທີ່ລາບພຽງເປັນດົງນີ້ ທີ່ລາບເມືອງສິງ ແລະຫລວງນ້ຳ
ທາ ອັນເປັນອູ່ເຂົ້າອູ່ນ້ຳຂອງແຂວງນີ້ ແຕ່ດ້ວຍການຄົມ
ມະນາຄົມຍັງບໍ່ທັນສະດວກ ມີແຕ່ທາງເຮືອບິນຈາກ
ເມືອງຫ້ວຍຊາຍເຖິງຫລວງນ້ຳທາ ແລະເມືອງສິງ ແລະແລ່ນ
ຣົດໄດ້ສະເພາະແຕ່ຣະດູແລ້ງເທົ່ານັ້ນ. ອາກາດສົດຊື່ນ
ຫລັບຊາວຕ່າງຕົກແມ່ນຊອບທີ່ສຸດ ເພາະມີຄວາມເຢັນເຢືອກ
ອາກາດຄືກັບປະເທດຣົມ ບໍ່ຮ້ອນຫລາຍເໝືອນກັບພາກໃຕ້ຂອງ
ລາວ. ມີບູຊະນີຍະສະຖານເຊັ່ນ ພຣະບາທເມືອງເງິນ, ຜາ
ພຣະບາງປ່າກາງວວ ພຣະທາດສຸວັນນະຜາຄຳ ເມືອງຫ້ວຍຊາຍ,
ພຣະທາດຊຽງຕຶ່ງ ແລະທາດຫລວງພູຊຽງແຂງ ເມືອງສິງ ນອກນັ້ນ
ທຸກແຫ່ງຊຶ່ງມີຊາວພຸທທະສາສນິກະຊົນຢູ່ມາແຕ່ດັ້ງເດີມມີ
ວັດວາອາຣາມ ສລັກຫັກພັງຢູ່ຕາມປ່າ ຊຶ່ງມີພຣະພຸທທະຮູບ
ຫລາຍໆອົງແຕ່ໂບຣານນະການ ຂີ້ທາການຍັງບໍ່ມີໂອກາສ
ໄດ້ຂຸດຄົ້ນ. ພົລະເມືອງສຳຣວດແລ້ວເມື່ອປີ 1960-61

ມີຈຳນວນ 85.600 ຄົນ ແຕ່ເປັນຊົນຊາດຊົນເຜົ່າໃຫຍ່ 24 ເຜົ່າ
ດ້ວຍກັນຄື: 1/- ຂະມຸ 2/- ລະເມັດ 3/- ຊ້ຳຣອກ 4/-
ຊ້ຳປິດ 5/- ຊ້ຳສີດາ 6/- ຊ້ຳດຳ 7/- ສາມຕ່າວ 8/- ມູເຊີ
ຂາວ 9/- ມູເຊີແດງ 10/- ກູ່ 11/- ກໍ 12/- ລ້ານແຕນ
13/- ປານະ 14/- ແມ້ວຂາວ (ລາວມົ້ງ) 15/- ແມ້ວລາຍ (ລາວ
ມົ້ງ) 16/- ຢ້າວ (ລາວຫຍຸ່ນ) 17/- ໄທດຳ 18/- ໄທຍວນ
19/- ໄທລື້ 20/- ໄທເໜືອ 21/- ໄທງົ້ວ 22/- ໄທເຂີນ
23/- ໄທຂື້ ແລະ 24/- ໄທລາວ.

ຊົນຊາດເຫຼົ່ານັ້ນລ້ວນແລ້ວແຕ່ມີຄວາມຜູກພັນ
ສາມະຄີກັນໃນການຢູ່ການກິນການທຳມາຫາລ້ຽງຊີບ
ໃຫ້ວ່າພາສາປາກເວົ້າບໍ່ເໝືອນກັນ ຮີດຄອງປະເພນີ
ກໍແປກຕ່າງກັນເລັກໜ້ອຍ ແຕ່ດ້ວຍຄວາມສຳພັນອັນ
ສະນິດແໜ້ນມາແຕ່ໃດບູຮານະການ ທຸກຄົນມີຄວາມຮູ້
ສຶກຕົວເປັນເຈົ້າຂອງປະເທດຊາດຮ່ວມກັນ ແລະມີຂໍ້ດີ
ອັດຕົວຄົງກັນຢ່າງໜັກແໜ້ນ ຊົ່ວເວົ້າເລື່ອງສ່ວນຮວມຂອງ
ປະເທດຊາດ ອັນມາແລ້ວມີໜັກຫາໃດ ແຕ່ລະເຜົ່າຈະຕ້ອງ
ປຸ້ນລຸມກັນເປັນກ້ອນດຽວໃຈດຽວກັນໂລດ ບໍ່ເຄີຍຕ່າງໃຜຈະ
ແນກເຊື້ອຊາດເຜົ່າພັນ ອັນນີ້ຕົວຢ່າງໃນການຕໍ່ສູ້ໄພ
ສອງມຸມນີ້ສ ຊຶ່ງແຂງນີ້ໄດ້ມີປະຕິບາດອັນທໍລະອາດທານ
ມາຕລອດເວລາ ດ້ວຍຜົນງານທີ່ຈັດໄດ້ວ່າເປັນແນວເຫັນ

ຂອງປະເທດ ນັບຕັ້ງແຕ່ໄດ້ເລີ່ມທຳການຕໍ່ຕ້ານກັບໄພໂຄສນ
ນິຍົມເປັນຕົ້ນມາ ແຂວງນີ້ແມ່ນເປັນແຂວງດ່ານໜ້າໃນດ້ານ
ຍຸທະສາດ ແລະເສດຖະກິດ ທາງພາກເໜືອຂອງລາວ ທີ່ມີປະ
ຫວັດທີ່ພາບເປັນຕົນຂອງຕົນເອງ.

ນິໄສໃຈຄໍຂອງ ພົລະເມືອງທາງໃນແຂວງນີ້ລ້ວນ ແຕ່ເປັນ
ຄົນວ່ານອນສອນງ່າຍ ອົດທົນພາກພຽນ ຍຶດໝັ້ນ
ຕໍ່ຮີດຄອງປະເພນີຂອງແຕ່ລະຊົນຊາດຊົນເຜົ່າ ນັບຖືແຂກຄົນ
ທີ່ມາຢ້ຽມຢາມຢາມຂາວ ດັ່ງເຫັນຂອງເຂົາແຂງຕໍ່ວຽກງານ
ໃນການສົມທົບຫາລາຍຊົນເຜົ່າດ້ວຍຈິດເໝະຊາດ ທີ່ພາກັນ
ຕົນເອງເພີ່ງຕົນເອງເປັນເບື້ອງຕົ້ນ ການຢູ່ກິນແບບງ່າຍໆ
ແມ່ນນິໄສຂອງເຂົາເຈົ້າ ແຕ່ເມື່ອມີແຂກຄົນຕ່າງໆໄປ
ມາຫາ ເຂົາເຈົ້າຈະຮັບຮອງຢ່າງ ແລະຈັດໃຫ້ເປັນພິເສດແກ່
ບຸກຄົນເຫຼົ່ານັ້ນໂດຍຖືວ່າເປັນມາລະຍາດທີ່ດີພາຍໃນ
ຄອບຄົວຂອງເຂົາເຈົ້າ.

ພົລເມືອງໃນແຂວງນີ້ກໍ່ຄືຊົນເຜົ່າໃນການເພາະປູກ ແລະລ້ຽງ
ສັດ ຈຶ່ງກາຍເປັນຮີດຄອງປະເພນີ ດັ່ງຢ່າງເຊັ່ນ ຮີດ
ຄອງໃນການແຕ່ງດອງກໍ່ດີ ການຈະອອກເຮືອນໄປ
ຕັ້ງເຫຼົ້າສ້າງຕົວ ຢູ່ເປັນຄອບຄົວຕ່າງຫາກກໍ່ດີ ເຂົາ
ແກ່ພໍ່ແມ່ຈະຕ້ອງຈັດສັນເອົາເຮືອເອົາປູກ ແລະສັດລ້ຽງ
ເທົ່າທີ່ມີຕາມຖານະໃຫ້ໄປເປັນສິນສົມລົດ ເຂົາຈະເຫັນ
ອອກໄດ້ກໍ່ຍອັນສິ່ງເຫຼົ່ານີ້. ຖ້າຜູ້ບໍ່ມີຫຍັງກໍ່ຕ້ອງໃຫ້

ມີເຮືອນເບອກເຮືອນໃຫຍ່ 4-5 ຫ້ອງ (ຂອງພວກເປັນເຈົ້າຫ້ອງ) ແລະເຮືອນ
ຕົວເອງ. ຊຶ່ງແມ່ນຄົນທີ່ຢູ່ນຳກັນກໍຕ້ອງມີເຮືອນ 30-50 ຫ້ອງ
ແລະແມ່ນງົວຄວາຍທີ່ຫຼາຍກວ່ານັ້ນຕາມຖານະ ເພື່ອໃຫ້
ໄປຍົກທີ່ຢູ່ເຮືອນສືບຕໍ່ກັນໄປ. ຍ້ອນແນວນັ້ນເຮົາເຈົ້າ
ຈຶ່ງບໍ່ລະເລີຍໃຫ້ເຂົາຍາລະຕ່ອງໃຫ້ເຮືອນ ມາດແມ່ນວ່າຈະໄປ
ຕົກຢູ່ໃນທີ່ໃດກໍ່ຕາມ ເຂົາກໍ່ຈະ [illegible] ຕ້ອງຂອງມັນ
ໄວ້ຢູ່ເປັນນິດຈະລົມທົ່ວຊຸມຊາດຊຸມເຜົ່າໃດໆ ຫາກຖືກ
ຮັກສາແນ່ນແຟ້ນຕາມຮີດຄອງປະເພນີແລ້ວ ເຮົາເອີ້ນວ່າຈະຕ້ອງ
ຮັກສາບ່ອນວ່າງຂວາງ (ເຮືອນ) ໃຫ້ທົ່ວຖືກັນ ນີ້ແຮກຫຼາຍເທົ່າ
ໃດກໍ່ເພາະຍຄວາມຫວັງໃນຄວາມມີຜົນງົກຊຸມຊົນຫຼາຍເທົ່າ
ນັ້ນ ຈຶ່ງເທົ່າໃຫ້ເຮົາເອີ້ນວ່າຕົວເປັກບານນ່ວນງູ້ນແລະ
ຜ່ອກພໍໃຈ ຕໍ່ພີ່ນ້ອງໃນວົງລະນັ້ນ.

ເປັນຫາງແຂວງຫົວຂອງຊຶ່ງມີຊື່ອງຂື່ນທາງເທື່ອຮັ້ງ
ວ່າແຂວງຫລວງນໍ້າທາ ແລະບາງທີ່ຮັ້ງວ່າແຂວງຫົວຂອງ
ຈະວ່າເຫົາແຕ່ເຕົ້າບາງເມື່ອຝຣັ່ງເສດປົກຄອງໃຫ້ແບ່ງພົ້-
ນັບແຕ່ຝຣັ່ງເສດເຂົ້າຄອບຄອງປະເທດລາວເປັນຫົວເມືອງ
ຈີນເມື່ອປີ 1892 ເປັນຕົ້ນມາ ເຂົາໄດ້ຍົກເອົາແຂວງທາງ
ພາກເໜືອຄືແຂວງຫົວຂອງ-ໄຊຍະບູລີ- ຫົວພັນ ຈີນກັບ
ແຂວງຫລວງພຣະບາງ ເອີ້ນວ່າອານາຈັກຫລວງພຣະບາງໂດຍ
ແມ່ນພຣະບາທສົມເດັດພຣະເຈົ້າມຫາຊີວິດ ສີສວ່າງວົງ
ທຣົງເປັນຜູ້ປົກຄອງຈີນກັບຝຣັ່ງເສດ ນອກນັ້ນ (ປະເທະ

(ປະເທດລາວ ພາກເໜືອ ແລະ ພາກໃຕ້ ແມ່ນຂຶ້ນໃນກົງກັບຣາຊການຣັຖ ຝຣັ່ງເສດ) ນອກຈາກແຂວງພົ້ງສາລີ ເປັນແຂວງພິເສດ ຊຶ່ງເອີ້ນວ່າ ດິນແດນທີ່ຫ້າທະຫານ (5ème Territoire Millitaire) ແຂວງນີ້ ແມ່ນປົກຄອງແບບທະຫານຂອງຝຣັ່ງເສດ ຈົນກະທັ້ງຮອດ ລາວໄລຍະຕໍ່ທີ່ສອງ ຈຶ່ງໄດ້ມີການປ່ຽນແປງໃໝ່.

ການຂຶ້ນຕັ້ງແຂວງຫົວຂອງຕໍ່ ຝຣັ່ງໄດ້ສ້າງຄ້າຍທະຫານ ຂຶ້ນທີ່ຄູແຍ (ພູທະຫານ) ຢູ່ເໜືອບ້ານດອນວົ່ງ ບ່ອນນີ້ເປັນ ດິນສາມແຈ (ລາວ-ໄທຍ໌-ພະມ້າ) ຊຶ່ງປະຈຸບັນຄົນທັງຫຼາຍ ເອີ້ນວ່າ "ສາມຫຼ່ຽມທອງຄຳ" ເປັນສະຖານທີ່ຜລິດໄວ້ຝິ່ນ ຝິ່ນຢູ່ຝັ່ງດິນພະມ້າ ອັນມີຊື່ສຽງກ້ອງໂລກ. ເວລານັ້ນ ແມ່ນໄທຍ໌ຝຣັ່ງ ແລະ ອັງກິດ ອອກລ່າເອົາເມືອງຂຶ້ນໃນພວກ ພື້ນເອເຊັຽ, ອັງກິດໄດ້ຕັ້ງຄ້າຍທະຫານໄວ້ພາກເໜືອຂອງຝັ່ງ ພະມ້າ ຝຣັ່ງຈຶ່ງເປັນໄປຕັ້ງຄ້າຍທະຫານຂຶ້ນຢູ່ຄູແຍທາງ ຝັ່ງລາວ (ຄູແຍແມ່ນພາສາເຜົ່າກຸ້ຍ ທີ່ພະມ້າເອີ້ນທະຫານ ວ່າ "ແຍ" ຊຶ່ງກາຍເປັນຊື່ຄູແຍຈົນເຖິງປະຈຸບັນນີ້) ເມື່ອ ຝຣັ່ງຕັ້ງຄ້າຍຂຶ້ນແລ້ວກໍ່ໄດ້ກຽ້ວກ່ອມເອົາຄົນເຜົ່າກຸ້ຍ ແລະ ເຜົ່າ ເອີ້ນຮື້ ຢູ່ສອງຟາກຝັ່ງລາວ-ພະມ້າໃຫ້ລົງໄປຂຸດຄົ້ນຫາແຮ່ ເພັດນິນທີ່ມີຢູ່ເມືອງຫ້ວຍຊາຍ ເມື່ອຈາກພວກນີ້ປົນຍັດ ໄສ່ນັກຂຸດຄົ້ນຫາເພັດນິນຈົນຕາມາກ່ອນແລ້ວ ຈຶ່ງພາ ກັນອົພະຍົບລົງສູ່ຫ້ວຍຊາຍ ຕັ້ງຄູບບ້ານຢູ່ເພື່ອຂຸດຄົ້ນ ແກ້ວເພັດນິນ ຈົນໄດ້ຜົລແລະກາຍເປັນຜູ່ຫັນ ແລະເປັນ ເມືອງ ຈົນຝຣັ່ງໄດ້ແຕ່ງຕັ້ງເຈົ້າເມືອງຂຶ້ນປົກຄອງ ແມ່ນ

ເຈົ້າເມືອງ "ອຸດົມ" ເປັນເຈົ້າເມືອງຜູ້ໃຫຍ່ທໍາອິດຂອງເມືອງຫ້ວຍ
ຊາຍ. ເມື່ອສົງຄາມມະຫາການຄັ້ງທີ່ສອງລະຫວ່າງ ຍີ່ປຸ່ນ - ຝຣັ່ງເສດ
ໄດ້ຕົກຕາຍສົງແລ້ວ ຝຣັ່ງຈຶ່ງຫຼົບໜີແຍ່ງມາຂ້າງຕາ...ລາວ
ຂອງຈີນທີ່ບ້ານທາງຊຽງຕໍ່ເຫັນຢູ່ໃນປະຈຸບັນນີ້ ຈີນກ່ຽວເປັນ
ເມືອງແລະຕັ້ງໃຫ້ມີການປົກຄອງ ອັນທີ່ເອີ້ນວ່າ (Resident
de france) ຢູ່ທີ່ນັ້ນ. ຕໍ່ມາຝຣັ່ງຈະຕັດຍາກເອົາແຂວງ
ສິບສອງພັນນາ ຊຽງຮຸ່ງ ເຂົ້າມາຮ່ວມແຜ່ນດິນລາວເຫຼືອແນວໃດ
ກໍບໍ່ຂາຍ ເພາະວ່າເວລານັ້ນຝຣັ່ງກໍາລັງເອົາແຜ່ນດິນແຂວງ
ນານ ຊຽງຮຸ່ງຢູ່ ແລະ ສົງຄາມ ລົດໄຟສາຍຢູ່ນານ. ທ່ານໃຫຍ່ຈຶ່ງ
ຍ້າຍທີ່ວ່າການ Resident de france ໄປຕັ້ງຢູ່ເມືອງສິງ
(ຊາຍແດນລາວ - ຈີນ).

ເມື່ອສົງຄາມໂລກຄັ້ງທີ່ສອງລະເບີດຂຶ້ນ ສົງຄາມໄທຍ-
ອິນໂດຈີນກໍລະເບີດຕາມ ລາວຕ້ອງເສຍເມືອງແຂວງໄຊຍະບູລີແລະ
ຈໍາປາສັກໃຫ້ແກ່ໄທຍໃນລະຍະໜຶ່ງ ແລ້ວຍີ່ປຸ່ນກໍເຂົ້າຄອບຄອງ
ອິນໂດຈີນ ໂດຍຜ່ານທາງທາງໄທຍເຂົ້າສູ່ແຂວງເຫຼົ່ານີ້ ບຸກບັ່ນໃຫ້
ລາວທໍາການຕໍ່ຕ້ານຝຣັ່ງເສດ ເປັນເຫດໃຫ້ມີ 3 ຂະບວນການລາວ
ອິດສະຫຼະຕໍ່ຕ້ານຝຣັ່ງເສດຂຶ້ນໃນເວລານັ້ນ ບໍ່ໜັກເທົ່າໃດສົງຄາມໂລກ
ກໍສະຫງົບລົງ ກອງພົນ 93 ຂອງຈີນກໍພາ 3 ຂະບວນ ຜ່ານເມືອງສິງ ຫຼວງນໍ້າ
ທາ ລົງສູ່ຫຼວງພຣະບາງແລະວຽງຈັນ ເພື່ອຮັບໄລ່ຍີ່ປຸ່ນ ພ້ອມກັນນັ້ນ
ຝຣັ່ງກູ້ຮ່ວມກັບສໍາພະນາທານຂະບວນສົງຄາມກໍສື່ບເຂົ້າຍຶດຄອງ
ລາວເພື່ອແກ້ແລະຕໍ່ວ່າເອົາສອງແຂວງຂອງລາວຈາກໄທຍຄືນມາ

ໃນລະຍະນັ້ນ ຊາວເມືອງຫ້ວຍຊາຍໄດ້ຖືກທະຫານໄທຍ໌ກວາດຕ້ອນ
ໃຫ້ຂ້າມຂອງໄປຢູ່ຝັ່ງໄທຍ໌ທີ່ບ້ານຫ້ວຍໄຄ້. ສງຄາມອ່ານເພິ່ງງຽບ
ແລ້ວ ຈຶ່ງເອົາເມືອງຫ້ວຍຊາຍຄືນ ພໍສົງຄາມສງົບລົງຊາວ
ຫ້ວຍຊາຍຕ້ອງກັບຄືນບ້ານດ້ວຍນ້ຳຕາອາບແກ້ມ ທຸກໆຄອບຄົວ
ກັບຄືນບ້ານເຫັນແຕ່ເຖົ້າຖ່ານແຫ່ງຄວາມພິນາດ ອັນເປັນຜົນຮັບ
ເພາະເຫດວ່າທ່ານເຫຼືອແສນທີ່ຈະພັນລະນາ ດ້ວຍການກັ້ນ
ນ້ຳນ້ຳຕາ ແລະ ຄວາມເຂັ້ມແຂງເຂົາໄດ້ພຍາຍາມຕັ້ງຕົວປຸກສ້າງ
ໃໝ່ເພື່ອສ້າງບ້ານແປງເມືອງ ເໝືອນກັບຊາວເຮົາຫຼັງໄດ້ອາສາ
ກູ້ຊາດທີ່ແລ້ວມານີ້.

ດ້ວຍຄວາມປີຊາສາມາດ ແລະ ເຫັນການໄກຂອງຂອງ
ສົມເດັດເຈົ້າເພັດຊະລາດ ຈຶ່ງໄດ້ມາຈັດຕັ້ງແຂວງຫົວຂອງຂຶ້ນໃໝ່
ມີທີ່ວ່າການແຂວງຢູ່ທີ່ເມືອງຫ້ວຍຊາຍຕາມອານາເຂດຕ່າງໆ
ມາແລ້ວເປັນປີ ແລ້ວເອີ້ນຊື່ວ່າ "ແຂວງຫົວຂອງ" ເມື່ອປີ 1941
ຊຶ່ງແມ່ນພຣະທ່ານພອຍ ຊຸມະນັກອນ ເປັນເຈົ້າແຂວງຜູ້ທຳອິດ
ຈຶ່ງໄດ້ມານະຍົກວ່າ "ພຍາຫົວຂອງ" ຕໍ່ມາກໍ່ມີຜັນ
ແປ່ງໄປຕາມສະຖານະການຂອງໂລກ ເມື່ອປີ 1944 ຕໍ່ພໍຕັ້ງ
ກ່າວມາແລ້ວນັ້ນ. ແຂວງຫົວຂອງ ຕ້ອງກາຍເປັນແຂວງຮ້າງ
ວ່າງເປົ່າ ດ້ວຍການກູ້ຊາດເປັນຂຶ້ນສູດທ້າຍຂອງຂະບວນລາວ
ອິສຣະ ເມື່ອຈາກການຕໍ່ສູ້ຂຶ້ນຊາດທົ່ວປະເທດເພື່ອປົດ
ແອກຂາກຝຣັ່ງເສດໄດ້ເຂົ້າມາຕີຈາກເມືອງທ່າແຂກ ແລ້ວ
ມາສູ້ຕໍ່ຢູ່ເມືອງວຽງຈັນ ກັບມາຍັງນັກລົ້ມຢູ່ທີ່ຫຼວງພຣະບາງ
ກໍ່ບໍ່ແລ້ວ ຈຶ່ງໄດ້ສູ້ກົດຕາມໄສ້ກັບທີ່ບໍ່ແກ້ວຫ້ວຍຊາຍ

ເປັນບາດສຸດທ້າຍ ຈຶ່ງໄດ້ຍ້າຍເຂົ້າສູ່ປະເທດໄທຍ໌ໃນປີ 1945
ນີ້ແມ່ນເຫດການໜຶ່ງຂອງ ຂະບວນການ ລາວອິດສະຣະ ຊຶ່ງມີ
ພຣະທ່ານ ພະຍາຄຳມ້າວ ວິໄລ ເປັນນາຍົກຣັຖະມົນຕີໃນໄລຍ
ນັ້ນ ຊຶ່ງ ພົວພັນຢູ່ກັບແຂວງທັງສອງເປັນບັ້ນສຸດທ້າຍ ຈຶ່ງມີພຣະ
ທ່ານເຈົ້າສົມສະນິດ ວັດທະນະວົງກິດ ເປັນຣັຖະມົນຕີວ່າການກະ
ຊວງມະຫາດໄທ ໄດ້ຈັບອາວຸດຕໍ່ຕ້ານ ຝຣັ່ງເພື່ອກູ້ເອົາ
ເອກະຣາຊຊາດລາວໃນປາງນັ້ນ.

ເມື່ອປີ 1947 ຫລັງຈາກຝຣັ່ງໄດ້ເຊັນສັນຍາມອບເອກະ
ຣາຊໃຫ້ແກ່ລາວແຕ່ຢູ່ໃນເຄືອສະຫະພັນຝຣັ່ງເສດນັ້ນ
ຣັຖະບານລາວໃໝ່ຈຶ່ງໄດ້ຈັດຕັ້ງແຂວງຂຶ້ນໃໝ່ຢູ່ທີ່ເມືອງ
ຫລວງນ້ຳທາ ໂດຍໃຫ້ຊື່ວ່າແຂວງ "ຫລວງນ້ຳທາ" ໂດຍ
ແມ່ນທ່ານປານ ສີສຸພັນທອງ ເປັນເຈົ້າແຂວງຜູ້ທຳອິດ ຈົນກະທັ້ງ
1949 ຝຣັ່ງໄດ້ມອບເອກະຣາຊຄົບຖ້ວນແກ່ລາວແລ້ວ. ແຂວງ
ນີ້ກໍ່ໄດ້ກາຍເປັນແຂວງໜຶ່ງອີກທີ່ຕ້ອນຮັບເອົາຊາວອົພະຍົບ
ກູ້ຊາດ (ລາວອິດສະຣະ) ທີ່ຕົກຄ້າງຢູ່ຕ່າງປະເທດຄືໄທຍ໌.
ພະມ້າແລະຈີນກັບຄືນເຂົ້າສູ່ປະເທດເພື່ອສ້າງບ້ານແປງ
ເມືອງຮ່ວມກັນສົ່ງເສີມ ນ້ຳໃຈປອງດອງສາມະຄີ.

ເມື່ອປີ 1962 ຫລວງນ້ຳທາໄດ້ຖືກລາວແດງ ໂດຍການສົ່ງ
ຂອງຫວຽດນາມເໜືອ ໂຈມຕີຢ່າງໜັກໜ່ວງ ເປັນປະຫວັດ
ການຂອງລາວ ຈຶ່ງກອງທັບແຫ່ງຊາດຈະຕ້ອງລ່າຖອຍຊົ່ວຄາວ
ແຕ່ກໍ່ພັກຄືນໄດ້ຄັ້ງການຕັ້ງຕົວໃໝ່ ຈຶ່ງມີການແບ່ງ
ເຂົ້າຢູ່ທີ່ນ້ຳຍູ ແລະນ້ຳຕູຍ ທາງການຣັຖະບານລາວ

ຈຶ່ງໄດ້ຍ້າຍແຂວງມາຕັ້ງໃໝ່ຢູ່ທີ່ຫ້ວຍຊາຍ ຈຶ່ງໄດ້ເອີ້ນຊື່ໃໝ່ວ່າ ແຂວງຫົວຂອງ ເຊັ່ນເດີມ ເພາະເປັນແຂວງທີ່ເໝາະສົມກັບຊື່ ຄວາມເປັນຈິງ ເພື່ອຫາກຢູ່ຫົວແມ່ນ້ຳຂອງ ແລະ ຕັ້ງຢູ່ຫົວຂອງ ປະເທດເໜືອສຸດນັ້ນເອງ (ເບິ່ງຕາມແຜນທີ່).

ພື້ນການຕໍ່ສູ້ຢູ່ໃນແຂວງນີ້ຍັງບໍ່ໄດ້ຢຸດຢັ້ງຈົນກະທັ້ງເສັຍເມືອງຫລວງນ້ຳທາ ແລະ ເມືອງສິງໃຫ້ແກ່ຝ່າຍສັດຕູ ພາງໃນແຂວງຈຶ່ງບໍ່ມີໂອກາດໄດ້ພັດທະນາທ້ອງຖິ່ນ ທຸກພາກສ່ວນພາຍໃນແຂວງໄດ້ກາຍເປັນແດນເລືອດແຫ່ງການຕໍ່ສູ້ ເມືອງຫ້ວຍຊາຍຊຶ່ງເປັນເມືອງທີ່ຕັ້ງແຂວງໃໝ່ ຈຶ່ງກາຍເປັນສະຖານທີ່ຕ້ອນຮັບຊາວອົພະຍົບ ຈາກທົ່ວເມືອງຂອງແຂວງ ລົງໄປອາໄສຢູ່ເມືອງຫ້ວຍຊາຍ ເພາະປະຊາຊົນມີອິດຍາກ ເພາະແຕ່ນບໍ່ມັກລັດທິຄອມມູນິສ ອັນມີແຕ່ການບີບບັງຄັບເທົ່າ ແລະ ເຂັ່ນຂ້າຜູ້ທີ່ບໍ່ຍອມຮ່ວມກັບພວກຂອງເຂົາ ປະຊາຊົນຈຳນວນມາກຕ້ອງຕັດສິນໃຈເດີນທາງລັດປ່າຜ່າດົງ ໜີເຂົ້າເຂດທີ່ຄອມມູນິສ ລົງສູ່ຫ້ວຍຊາຍຢ່າງໜ້າເວທະນາ ແລະ ແສນແສບ.

ພາຍໃຕ້ການປົກຄອງຂອງສະເດັດເຈົ້າບຸນອຸ້ມ ວັດທະນາ ເຈົ້າແຂວງຫົວຂອງໃນເວລານັ້ນ ທາງອົງການຊ່ວຍເຫຼືອອະເມຣິກາ USAID ຈຶ່ງໄດ້ເຂົ້າຊ່ວຍເຫຼືອດ້ານການຢູ່ກິນ ແລະ ພັດທະນາທ້ອງຖິ່ນ ເປັນຕົ້ນຊ່ວຍຊາວອົພະຍົບໃນດ້ານອາຫານການກິນ ການເປັນຢູ່ ແລະ ປະກອບອາຊີບ ຕລອດການພັດທະນາດ້ານຊົນລະປະທານ ການກະເສດ ມີການຂຸດນ້ຳບໍ່ກໍ່ສາລາ, ນ້ຳທາດວນ, ໂຮງໝໍ, ໂຮງຮຽນ, ຖນົນຫົນທາງ

ພ້ອມ ອີວ, ເພື່ອໝາຍແລະ ສນາມບິນ ຕາມ ຈຸດຕ່າງໆ ທີ່ມີ ປະຊາຊົນໜາແໜ້ນໃຫ້ໄດ້ຮັບ ຄວາມສະດວກສະບາຍ ຈົນແຂວງ ຫົວຂອງໄດ້ກາຍເປັນແຂວງ ທີ່ກ້າວໜ້າໃນດ້ານພັດທະນາ ທັນການກັບ ປະເທດເພື່ອນບ້ານເຊັ່ນ ປະເທດໄທຍ໌ ຊຶ່ງຢູ່ໃກ້ກັນກໍ່ຍັງໄດ້ມາອາໄສ ພະຍາບາລຕົວຢ່າງທີ່ໂຮງພະຍາບາລ ຫ້ວຍຊາຍ ຊຶ່ງລິເລີ່ມມາຈາກໂຮງໝໍ TOM DOOLEY ຈົນກາຍເປັນໂຮງພະຍາບາລໃຫຍ່ໃຫ້ປະຊາຊົນແຖບນັ້ນ (ຊຽງຂອງ) ໄດ້ມີການພະຍາບາລຕົວ ສະດວກສະບາຍ ຍ້ອນຜົນງານ ຂອງອົງການ USAID ແລະ ສະໂມສອນເພື່ອນ ຫ້ວຍຊາຍຮ່ວມກັນເຕົ້າໂຮມພລັງຄວາມສາມະຄີໃນຫມູ່ ຂ້າຣາຊການ, ທະຫານ, ຕໍາຣວຈ ແລະ ປະຊາຊົນ ເປັນຢ່າງດີ ໃຈດຽວກັນ ບໍ່ວ່າຈະໄປແຫ່ງຫົນໃດ ຈະເຫັນສັນຍາລັກ ປ້າຍບອກ ມິດຕະພາບ ລາວ-ອະເມຣິກາ ຊຶ່ງມີຮູບຈັບມືກັນ ຢູ່ທຸກແຫ່ງຫົນ ທີ່ໄດ້ພັດທະນາແລ້ວ.

ພໍແຕ່ແຂວງຫົວຂອງໄດ້ກ້າວຂຶ້ນ ສູ່ການພັດທະນາໃໝ່ ອັນເປັນແສງສວ່າງແຫ່ງຄວາມກ້າວໜ້າ ຍັງບໍ່ທັນເຖິງຂັ້ນແຫ່ງຄວາມຈະເຣີນ ເມື່ອ 1974 ກໍ່ບັງເກີດມີເຫດການຕາມແຜນຂອງຄອມມູນິສ໌ລຸກລາມ ທໍາໃຫ້ທົ່ວທັງປະເທດລາວຕ້ອງແຕກສະລາຍ ຍ້ອນນ້ຳມືອັນຊົ່ວຊ້າ ປ່າເຖື່ອນ ຂອງພວກໄກສອນຜູ້ທໍຣະຍົດ ບູຊາແກວເປັນພະເຈົ້າ ເອົາເຊື້ອຊາດແກວເຂົ້າມາຄອບຄອງລາວ ໂດຍປະລິຍາຍ.

ເທົ່າທີ່ເວົ້າມາໂດຍຍໍ່ໆ ພໍໃຫ້ທ່ານຜູ້ອ່ານໄດ້ຮູ້ຈັກປະຫວັດແຂວງຫົວຂອງ ບ່ອນຕັ້ງແຂວງຢູ່ທີ່ໃດ? ມີການເປັນຢູ່ແບບໃດ? ເຈຣີນກ້າວໜ້າຂນາດໃດ? ມີປະສົບການໃນການຕໍ່ຕ້ານມາແລ້ວ

ຈົນຮອດຄວາມເສັ່ຽງໄພແກ່ຄອມມູນິສຕ໌ຮຸກຮານ ໂດຍສະເພາະວຽດ ນາມເໜືອທັງຈະເປັນເຈົ້າໃຫຍ່ນາຍໃຫຍ່ໃນແຫຼມອິນໂດຈີນ ຊຶ່ງຄຸກ ຄາມ ແລະ ຄອບຄຸມເຂມັນ ແລະ ລາວ ຢູ່ໃນປະຈຸບັນນີ້.

ແຕ່ກໍຈະມີວັນໜຶ່ງ ຊຶ່ງວິລະປະຫວັດສາດ ຈະເຫຼືອບມາ ບັນທຶກຄືນຮອບໃຫ້ແຂວງຫົວພັນນີ້ ໄດ້ກາຍເປັນແຂວງທີ່ກອບ ກູ້ເອົາຊາດ ອະທິປະໂຫຍດ ຢ່າງໃຫຍ່ຫຼວງ ຈົນໄດ້ໄຊຊະນະໃນເບື້ອງສຸດ ທ້າຍ ເພາະແຂວງນີ້ບໍ່ເຄີຍສິ້ນຫວັງໃນການຕໍ່ສູ້ຕັ້ງ ກ່ອນມາແລ້ວແຕ່ຕົ້ນຈົນຈົບ -/-

ໂດຍ ພະຣຸ ນວນ. 03-01-89